Generated by Foxit PDF Creator © Foxit Software
http://www.foxitsoftware.com For evaluation only.



# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Embassy of the Lao PDR
1, Dalman Crescent
O'Malley, ACT 2606
Tel: (02) 6286 4595, Fax: (02) 6286 1910
E-mail: laoemb@bigpond.net.au
Website: laosembassy.net

**ສະບັບທີ: 01/2011**

## ຂ່າວສານສະຖານທູດ

### I. <u>ການພັດທະນາເສດຖະກິດ-ສັງຄົມ ຂອງລາວ</u>

*ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ສໍາເລັດຢ່າງຈົບງາມ*

ໂດຍອີງຕາມຂໍ້ກໍານົດ ໃນມາດຕາ 33 ວ່າດ້ວຍກົດໝາຍເລືອກຕັ້ງສະມາຊິກສະພາແຫ່ງຊາດ, ໃນເວລາ 7.00 ໂມງ ຮອດ 17.00 ໂມງ ຂອງວັນທີ 30 ເມສາ 2011 ໄດ້ມີການຈັດພິທີປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ຢ່າງເປັນເອກກະພາບກັນໃນ 17 ເຂດເລືອກຕັ້ງທົ່ວປະເທດ. ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ນີ້ ໄດ້ດໍາເນີນໄປດ້ວຍບັນຍາກາດທີ່ຟົດຟື້ນ, ໂປ່ງໃສ ແລະ ຖືກຕ້ອງຕາມລະບຽບກົດໝາຍ ພ້ອມທັງມີຄວາມສະຫງົບ. ປະຊາຊົນລາວບັນດາເຜົ່າຜູ້ມີສິດເລືອກຕັ້ງ ໄດ້ປະຕິບັດສິດປະຊາທິປະໄຕຂອງຕົນຢ່າງເຕັມສ່ວນ ເຊິ່ງສາມາດເລືອກຕັ້ງໄດ້ສະມາຊິກສະພາແຫ່ງຊາດຜູ້ທີ່ມີມາດຕະຖານ ເພື່ອປະກອບສ່ວນເຂົ້າໃນການປັບປຸງບູລະນະສະພາແຫ່ງຊາດໃຫ້ໝັກແໜ້ນເຂັ້ມແຂງຂຶ້ນເລື້ອຍໆ ໃນຖານະທີ່ເປັນອົງການຕົວແທນແຫ່ງສິດອໍານາດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ.

ພາຍຫຼັງທີ່ຄະນະກໍາມະການເລືອກຕັ້ງຂັ້ນທ້ອງຖິ່ນ ໄດ້ສໍາເລັດການນັບຄະແນນສຽງເປັນທີ່ຖືກຕ້ອງ ແລະ ຮຽບຮ້ອຍແລ້ວ ກໍໄດ້ລາຍງານຜົນການເລືອກຕັ້ງມາຍັງຄະນະກໍາມະການເລືອກຕັ້ງລະດັບຊາດ ເພື່ອປະກາດຜົນຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ VII ດັ່ງລາຍລະອຽດລຸ່ມນີ້:

1. **ຜູ້ມີສິດເລືອກຕັ້ງ:** ຈໍານວນຜູ້ມີສິດປ່ອນບັດເລືອກຕັ້ງທັງໝົດມີ: 3.244.312 ຄົນ, ເພດຍິງມີ: 1.617.157 ຄົນ. ຜູ້ມາໃຊ້ສິດຕົວຈິງ 3.233.241 ຄົນ ເທົ່າກັບ 99,65% ຂອງຈໍານວນຜູ້ມີສິດທັງໝົດ.

2. **ຜູ້ສະໝັກຮັບເລືອກຕັ້ງ:** ຈໍານວນຜູ້ສະໝັກຮັບເລືອກຕັ້ງທັງໝົດໃນທົ່ວປະເທດ ມີ 190 ທ່ານ ໃນນັ້ນ: ເພດຊາຍ: 143 ທ່ານ ເທົ່າກັບ 75,26% ,ເພດຍິງ: 47 ທ່ານ ເທົ່າກັບ 24,73% ຂອງຈໍານວນຜູ້ສະໝັກທັງໝົດ.

Generated by Foxit PDF Creator © Foxit Software
http://www.foxitsoftware.com For evaluation only.

3. **ຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ VII:** ຈຳນວນຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດທັງໝົດມີ 132 ທ່ານ ເພື່ອມາເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ.

### *ສປປ ລາວ ສືບຕໍ່ນະໂຍບາຍຕໍ່ຄົນເຊື້ອຊາດລາວຢູ່ຕ່າງປະເທດ*

ທ່ານ ຈູມມາລີ ໄຊຍະສອນ, ປະທານປະເທດ ແຫ່ງ ສປປ ລາວ, ໄດ້ກ່າວວ່າ ປັດໄຈສຳຄັນຕົ້ນຕໍອີກຢ່າງໜຶ່ງ ທີ່ຈະມີບົດບາດໃນການພັດທະນາປະເທດຄື ການເສີມສ້າງຄວາມຮ່ວມມືຢ່າງໃກ້ຊິດລະຫວ່າງຄົນລາວ ຢູ່ໃນປະເທດກັບຄົນລາວຢູ່ຕ່າງປະເທດ. ພັກ-ລັດຖະບານລາວ ມີນະໂຍບາຍສົ່ງເສີມ ແລະ ຍິນດີຕ້ອນຮັບຄົນລາວທີ່ຢູ່ຕ່າງປະເທດໃຫ້ກັບຄືນມາປະເທດ ແລະ ຈະດຳເນີນນະໂຍບາຍດັ່ງກ່າວຕໍ່ໄປຢ່າງບໍ່ຢຸດຢັ້ງ. ທ່ານ ຈູມມາລີ ໄດ້ຢໍ້າຕື່ມວ່າ: *"ໂດຍຍຶດໝັ້ນໃນແນວທາງສ້າງຄວາມສາມັກຄີປອງດອງຂອງທົ່ວປວງຊົນລາວ, ເວລາໃດກໍ່ຖືວ່າພີ່ນ້ອງເຊື້ອຊາດລາວຢູ່ຕ່າງປະເທດ ຍັງເປັນສ່ວນໜຶ່ງຂອງວົງສາຄະນະຍາດແຫ່ງຊາດ. ສະນັ້ນ, ຈຶ່ງຍິນດີຕ້ອນຮັບຜູ້ທີ່ມີນໍ້າໃຈຮັກຊາດ ແລະ ຮັກບ້ານເກີດເມືອງນອນໃຫ້ຫັນໜ້າມາຫາປະເທດຊາດ ເພື່ອປະກອບສ່ວນສະຕິປັນຍາ, ເຫື່ອແຮງ ແລະ ທຶນຮອນເຂົ້າໃນການສ້າງສາມາຕຸພູມຮ່ວມກັບຄົນລາວຢູ່ພາຍໃນປະເທດ"*. ທ່ານ ຫຸງມ ພົມມະຈັນ, ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດລາວ, ກໍ່ໃຫ້ການຢືນຢັນວ່າ ທາງການລາວຈະໃຫ້ການສະໜັບສະໜູນ ແລະ ອຳນວຍຄວາມສະດວກໃນທຸກດ້ານແກ່ຄົນລາວຢູ່ຕ່າງປະທດທີ່ຕ້ອງການ ຈະເດີນທາງກັບຄືນມາປະເທດເຊັ່ນ: ການອຳນວຍຄວາມສະດວກ ໃນການໄປ-ມາ, ການແຕ່ງດອງ ລະຫວ່າງຄົນລາວຢູ່ໃນປະເທດກັບຄົນລາວຢູ່ນອກປະເທດ, ການກັບມາຢູ່ລາວແບບຖາວອນ, ອຳນວຍຄວາມສະດວກໃນດ້ານນິຕິກຳ ຫລືອະນຸຍາດໃຫ້ມີສິດໃນທີ່ດິນ ແລະ ຢູ່ອາໄສ. ນິຕິກຳທີ່ສຳຄັນ ທີ່ກຳລັງພິຈາລະນາຢູ່ຄື ດຳລັດວ່າດ້ວຍການໃຫ້ກຳມະສິດໃນການຄອບຄອງ ແລະ ເປັນເຈົ້າຂອງທີ່ດິນໃນລາວແກ່ຄົນລາວຢູ່ຕ່າງປະເທດທີ່ຕ້ອງການມາຢູ່ລາວແບບຖາວອນ. ນອກນັ້ນ, ທ່ານ ຫລີ ບຸນຄໍ້າ, ຫົວໜ້າກົມພົວພັນເຊື້ອຊາດລາວຢູ່ຕ່າງປະເທດ ກະຊວງການຕ່າງປະເທດລາວ, ຍັງກ່າວວ່າ ຜົນການສຶກສາວິໄຈກ່ຽວກັບການສະໜັບສະໜູນສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຄົນລາວຢູ່ຕ່າງປະເທດ ເພື່ອໃຫ້ກັບຄືນມາປະເທດນັ້ນພົບວ່າ ຈະສົ່ງຜົນດີຢ່າງຍິ່ງຕໍ່ການພັດທະນາປະເທດ ໃຫ້ຈະເລີນກ້າວໜ້າເທົ່າກັບບັນດາປະເທດໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ພາກພື້ນອື່ນໆ. ເພື່ອເປັນການສົ່ງເສີມນະໂຍບາຍຕໍ່ຄົນເຊື້ອຊາດລາວຢູ່ຕ່າງປະເທດ ລັດຖະບານແຫ່ງ ສປປ ລາວ ໄດ້ຕົກລົງຍົກເວັ້ນຄ່າທຳນຽມວີຊ່າໄລຍະສັ້ນ ປະເພດ (NI-B3) ເຂົ້າ ສປປ ລາວ ແລະ ຍົກເວັ້ນຄ່າທຳນຽມໃນການຂໍຕໍ່ໄລຍະພັກເຊົາ, ຊຶ່ງມີລາຍລະອຽດດັ່ງນີ້:

1. ຍົກເວັ້ນຄ່າທຳນຽມໃຫ້ຄົນເຊື້ອຊາດລາວ ຜູ້ມີອາຍຸ 65 ປີຂຶ້ນໄປ, ຜູ້ມີອາຍຸຕໍ່າກວ່າ 15 ປີລົງມາ, ນັກບວດ, ຜູ້ເສຍຈິດ ແລະ ເສຍອົງຄະ, ທີ່ມາຂໍວີຊ່າເຂົ້າ ສປປ ລາວ ຢູ່ສະຖານ

Generated by Foxit PDF Creator © Foxit Software
http://www.foxitsoftware.com For evaluation only.

ເອກອັກຄະລັດຖະທູດ, ສະຖານກົງສຸນໃຫ່ຍ, ແລະ ຢູ່ໜ່ວຍງານອອກວີຊ່າກັບດ່ານ ໃນຂອບເຂດທົ່ວປະເທດ. ໂດຍຈະໄດ້ຮັບອະນຸຍາດໃຫ້ພັກເຊົາຢູ່ ສປປ ລາວ ພາຍໃນ 90 ວັນ, ແລະ ສາມາດຕໍ່ອາຍຸການພັກເຊົາໄດ້ອີກ 90 ວັນ ໂດຍບໍ່ເສຍຄ່າທຳນຽມ.

2. ຍົກເວັ້ນຄ່າທຳນຽມໃຫ້ຄົນເຊື້ອຊາດລາວ ຜູ້ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ທີ 1 ຂ້າງເທິງ ທີ່ມາຂໍວີຊ່າເຂົ້າ ສປປ ລາວ ຢູ່ສະຖານເອກອັກຄະລັດຖະທູດ ແລະ ສະຖານກົງສຸນໃຫ່ຍ. ໂດຍຈະໄດ້ຮັບອະນຸຍາດໃຫ້ພັກເຊົາຢູ່ ສປປ ລາວ ພາຍໃນ 60 ວັນ, ແລະ ສາມາດຕໍ່ອາຍຸການພັກເຊົາໄດ້ຕື່ມອີກ 60 ວັນ ໂດຍບໍ່ເສຍຄ່າທຳນຽມ. ສຳລັບການສະເໜີຂໍວີຊ່າກັບດ່ານ ຈະຕ້ອງໄດ້ເສຍຄ່າວີຊ່າຕາມຫຼັກການ ແລະ ເມື່ອສະເໜີຂໍຕໍ່ອາຍຸການພັກເຊົາຢູ່ ສປປ ລາວ ແມ່ນເສຍຄ່າທຳນຽມ 1 ໂດລາສະຫະລັດ/ຄົນ/ມື້ (ປະຈຸບັນແມ່ນ 2 ໂດລາສະຫະລັດ/ຄົນ/ມື້).

## II. <u>ຂ່າວອື່ນໆ.</u>

ໃນວັນເສົາ ທີ 16 ເມສາ 2011 ກົງກັບວັນຂຶ້ນ ໑໔ ຄ່ຳ ເດືອນ ໕ ປີຂານ ພ.ສ ໒໕໕໔ ຢູ່ທີ່ສຳນັກງານສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ລາວ ທີ່ ນະຄອນຫຼວງແຄນເບີຣາ ໄດ້ຈັດງານສະເຫຼີມສະຫຼອງ ເນື່ອງໃນໂອກາດສົ່ງທ້າຍປີເກົ່າ ເພື່ອຕ້ອນຮັບປີໃໝ່ລາວ (ປີເຖາະ ພ.ສ ໒໕໕໔). ໃນໂອກາດດຽວກັນນີ້ ທາງສະຖານທູດ ໄດ້ພ້ອມກັນຕັ້ງກອງຜ້າປ່າສາມັກຄີ ເພື່ອໄປທອດຖວາຍ ທີ່ວັດລາວສີບຸນເຮືອງທາຣາມ ຢູ່ເມືອງ Wellington, ປະເທດນິວຊີແລນ ໃນວັນທີ 23 ເມສາ 2011. ໃນງານສະຫຼອງບຸນປີໃໝ່ລາວ ໄດ້ມີຍາດຕິພີ່ນ້ອງຄົນເຊື້ອຊາດລາວເດີນທາງມາຮ່ວມຢ່າງຫຼວງຫຼາຍ ໃນຕອນເຊົ້າໄດ້ມີການຈັດພິທີທາງສາສະໜາ ສູດໄຊຍະມຸງຄຸນ, ໄຫ້ວພຣະ, ຕັກບາດ, ຖວາຍພັດຕະຫານເພນແດ່ພະສົງ ແລະ ຮ່ວມບາສີສູ່ຂວັນເພື່ອຮັບພອນປີໃໝ່. ໃນຕອນຄ່ຳຂອງວັນດັ່ງກ່າວໄດ້ມີ ການຈັດງານລາຕີສະໂມສອນສະຫຼອງປີໃໝ່ລາວ, ເພື່ອເປັນການເຕົ້າໂຮມຄວາມສາມັກຄີຮັກແພງລະຫວ່າງພີ່ນ້ອງຄົນເຊື້ອຊາດລາວ ທີ່ເດີນທາງມາຈາກລັດຕ່າງໆຂອງປະເທດອົດສະຕຣາລີ ແລະປະເທດນິວຊີແລນ, ເຊິ່ງຈຳນວນແຂກທີ່ເດີນທາງມາຮ່ວມງານໃນວັນດັ່ງກ່າວມີປະມານ 500 ຄົນ.

ໃນງານດັ່ງກ່າວ, ທ່ານ ຮັງສີ ກອງໄຊສີ, ເອກອັກຄະລັດຖະທູດລາວ ປະຈຳປະເທດອົດສະຕຣາລີ ແລະ ນິວຊີແລນ ໄດ້ກ່າວຄຳເຫັນໂດຍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈມາຍັງຍາດຕິພີ່ນ້ອງຄົນລາວ ຜູ້ທີ່ຢູ່ໃກ້ແລະໄກ ທີ່ໄດ້ສະລະເວລາເດີນທາງມາຮ່ວມ ພ້ອມທັງປະກອບສ່ວນທາງດ້ານວັດຖຸແລະຈິດໃຈ ໃນການຮ່ວມເຮັດບຸນກິນທານກັບທາງສະຖານທູດ. ພ້ອມດຽວກັນ ທ່ານທູດຂໍອວຍໄຊໃຫ້ພອນໃຫ້ໝົດທຸກໆທ່ານ ຈົ່ງມີສຸຂະພາບເຂັ້ມແຂງປະສົບແຕ່ຄວາມຜາສຸກປະກອບດ້ວຍຈຸຕຸພອນທັງສີ່ ຄື: ອາຍຸ ວັນນະ ສຸຂະ ພະລະ ດ້ວຍເທີ້ນ.

---